# ບົດແນະນຳຂະບວນການໂຕະມົນ
# &
# ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ

ໂດຍ ພະແນກ ຈສກ, ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ

# ຫົວຂໍ້ນຳສະເໜີ




**ພາກ 1** ຄວາມເປັນມາ ແລະຈຸດປະສົງ

**ພາກ 2** ໂຄງສ້າງການຄຸ້ມຄອງບໍລິຫານ ຂະບວນການໂຕະມົນ

**ພາກ 3** ກອງປະຊຸມປິ່ນອ້ອມຂະບວນການ

**ພາກ 4** ການຕິດຕາມ ແລະປະເມີນຜົນ

# 1. ປັດແນະນຳຂະບວນການໂຕະມົນ

**ກົນໄກ ຂະບວນການ ໂຕະມົນ**

ຂະບວນການໂຕະມົນ ແມ່ນກົນໄກລະດັບຊາດ ພາຍໃຕ້ການຊີ້ນຳຂອງ ທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ທັງເປັນເວທີ ສຳລັບການ ປຶກສາຫາລື ລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາ ກ່ຽວກັບ ວາລະ ຂອງການພັດທະນາແຫ່ງຊາດ, ເພື່ອຮັບປະກັນການປະສານງານ ແລະ ການຮ່ວມມືທີ່ມີປະສິດພາບ ແລະ ປະສິດທິຜົນ;

# 1.1 ຄວາມເປັນມາ

ຂະບວນການໂຕະມົນ (RTP) ແມ່ນກົນໄກລະດັບຊາດ ຂອງລັດຖະບານ ສປປ ລາວ ເຊິ່ງເປັນເວທີຂອງລັດຖະບານ ແລະຄູ່ຮ່ວມພັດທະນາ (DPs) ໃນການປຶກສາຫາລື ກ່ຽວກັບວາລະການພັດທະນາແຫ່ງຊາດທີ່ສຳຄັນ

ຂະບວນການໂຕະມົນ ໄດ້ນຳໃຊ້ຫຼັກການສາກົນ ທີ່ໄດ້ຮັບຮອງ ແລະຕົກລົງໃນທົ່ວໂລກ ໂດຍສະເພາະການຮ່ວມມື ເພື່ອການພັດທະນາ (ການຄຳ້ຮ່ວມຕິດຕາມ ປະສິດທິຜົນການຮ່ວມມືເພື່ອການພັດທະນາ (GPEDC), ລວມທັງ ເປັນເຈົ້າການຈັດຕັ້ງປະຕິບັດວຽກບູລິມະສິດການພັດທະນາ ຂອງລັດຖະບານ

ຂະບວນການໂຕະມົນໄດ້ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ (NSEDP) ຢ່າງຕໍ່ເນື່ອງ

# 1.2 ຈຸດປະສົງຂອງປິດແນະນຳຂະບວນການໂຕະມົນ

ສະຫນອງຂໍ້ມູນ, ຂັ້ນ
ຕອນ ແລະວິທີວິທະຍາ
ໃນການຈັດຕັ້ງປະຕິບັດ
ວຽກງານຂະບວນການ
ໂຕະມົນ

ໃຫ້ຄຳແນະນຳ ໃນການຈັດຕັ້ງ
ປະຕິບັດວຽກງານ ແລະຂະບວນ
ການຕ່າງໆຂອງ ໜ່ວຍງານຂະ
ແໜງການ ເພື່ອປຶກສາຫາລືກັບ
ຄູ່ຮ່ວມພັດທະນາ, ການຄຸ້ມຄອງ
ໜ່ວຍງານຂະແໜງການ

ເພື່ອເປັນບ່ອນອີງໃນ
ການຈັດຕັ້ງປະຕິບັດ
ວຽກງານຂະບວນການ
ໂຕະມົນ

# 2. ໂຄງສ້າງການຄຸ້ມຄອງບໍລິຫານ ຂະບວນການໂຕະມົນ

ຂະບວນການໂຕະມົນ ຖືກກຳນົດຂຶ້ນເພື່ອສະໜັບສະໜູນການວາງແຜນ ແລະ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ໃຫ້ມີປະສິດທິຜົນ, ເຊິ່ງຖືເປັນເປັນຍຸດທະສາດການພັດທະນາ ຂອງ ສປປ ລາວ. ຂະບວນການໂຕະມົນ ປະກອບດ້ວຍ 3 ກົນໄກທີ່ສຳຄັນຄື:

**1. ກອງປະຊຸມໂຕະມົນ ລະດັບສູງ (HL-RTM)**

- **ຈຸດປະສົງ:** ເປັນເວທີສົນທະນາລວມ ໃນການປຶກສາຫາລືກ່ຽວກັບການປະເມີນຄືນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນໄລຍະຜ່ານມາ, ການສະຫລຸບຂອງ ແຜນພັດທະນາເສດຖະ ກິດ-ສັງຄົມແຫ່ງຊາດ ໄລຍະຕໍ່ໄປ ແລະວິທີການຂອງການຈັດຕັ້ງປະຕິບັດ.
- **ໄລຍະເວລາ ແລະສະຖານທີ່:** ຈັດທຸກໆ 5 ປີ ຢູ່ສູນກາງ ໂດຍການກວດກາຄືນແຜນການ, ຍຸດທະສາດ ແລະ ແຜນງານຂອງ ລັດຖະບານ ແຫ່ງ ສປປ ລາວ ກັບພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາ
- **ປະທານກອງປະຊຸມ:** ພະນະທ່ານ ນາຍົກລັດຖະມົນຕີ ກ່າວເປີດກອງປະຊຸມ ແລະ ມອບໝາຍໃຫ້ ທ່ານ ຮອງນາຍົກລັດຖະມົນຕີ ຫຼື ລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ ເປັນປະທານກອງປະຊຸມໂຕະມົນລະດັບສູງ ໂດຍມີເຈົ້າໜ້າທີ່ອາວຸໂສຈາກສຳນັກງານໃຫຍ່ ອົງການສະຫະປະຊາຊາດເປັນປະທານຮ່ວມ.
- **ຜູ້ເຂົ້າຮ່ວມ:** ຜູ້ແທນລະດັບສູງເຂົ້າຮ່ວມຈາກລັດຖະບານສປປ ລາວ, ບັນດາຄູ່ຮ່ວມພັດທະນາ ແລະ ພາກສ່ວກ່ຽວຂ້ອງອື່ນໆ.

**2. ກອງປະຊຸມໂຕະມົນ ລະດັບສູງ (RTM)**

- **ຈຸດປະສົງ:** ປຶກສາຫາລືກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະປີ ແລະກຳນົດບັນດາວຽກບຸລິມະສິດ ໃນຊຸມປີຕໍ່ໜ້າກັບບັນດາພາກສ່ວນກ່ຽວຂ້ອງດ້ານການພັດທະນາ. .
- **ໄລຍະເວລາ ແລະສະຖານທີ່:** ຈັດຂຶ້ນປີລະຄັ້ງ (ສ່ວນຫຼາຍແມ່ນຈັດຂຶ້ນໃນທ້າຍປີ) ເຊິ່ງຈະຖືກຈັດຂຶ້ນຢູ່ໃນຂັ້ນສູນກາງ ຫຼື ທ້ອງຖິ່ນ ຕາມຄວາມເໝາະສົມ
- **ປະທານກອງປະຊຸມ:** ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນປະທານກອງປະຊຸມໂຕະມົນປະຈຳປີ ໂດຍມີຜູ້ປະສານງານ ອົງການ ສປຊ ປະຈຳ ສປປ ລາວ ເປັນປະທານຮ່ວມ.
- **ຜູ້ເຂົ້າຮ່ວມ:** ຜູ້ເຂົ້າຮ່ວມລະດັບອາວຸໂສທີ່ກ່ຽວຂ້ອງທັງໝົດຈາກລັດຖະບານ, ຄູ່ຮ່ວມພັດທະນາ ແລະ ພາກສ່ວນກ່ຽວຂ້ອງອື່ນໆ.

# 3. ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ (SWG)

ມີໜ້າທີ່ໃນການນຳພາ-ຊີ້ນຳ ຕັດສິນບັນຫາທີ່ສຳຄັນ, ອະນຸມັດແຜນວຽກປະຈຳປີ ແລະອື່ນໆ

ການເປັນປະທານ
ແລະປະທານຮ່ວມ

ກອງເລຂາ ໜ່ວຍງານຂະແໜງການ

ເຮັດໜ້າທີ່ນຳພາໃນການປະສານງານ ໂດຍລວມ ໃນຂະບວນການເຮັດວຽກຂອງ ໜ່ວຍງານຂະແໜງການສ້າງແຜນວຽກ, ປະສານງານ ແລະປຶກສາຫາລື ກັບ ຄູ່ຮ່ວມພັດທະນາ ຕາມພາລະບົດບາດທີ່ໄດ້ລະບຸໄວ້ໃນກອບໜ້າວຽກ



## 2.1. ແຜນວຽກປະຈຳປີຂອງໜ່ວຍງານຂະແໜງການ

- ໜ່ວຍງານຂະແໜງການ (SWG) ຄວນກະກຽມ ແລະສົ່ງແຜນວຽກ ໜ່ວຍງານຂະແໜງການ ປະຈຳປີໃນທ້າຍເດືອນມີນາ, ລວມທັງຫົວຂໍ້ປຶກສາຫາລືບູລິມະສິດ, ໄລຍະເວລາ, ຜົນໄດ້ຮັບ / ຜົນໄດ້ຮັບທີ່ຄາດໄວ້, ແລະຕົວຊີ້ບອກ ເພື່ອຕິດຕາມຜົນໄດ້ຮັບ ໃຫ້ກອງເລຂາຂະບວນການໂຕະມົນ.
- ກອງເລຂາຂະບວນການໂຕະມົນ ຈະອັບໂຫລດແຜນວຽກ ໜ່ວຍງານຂະແໜງການປະຈຳປີ ຢູ່ໃນເວັບໄຊທ໌ຂະບວນການໂຕະມົນ (https://rtm.org.la/) ເພື່ແຈ້ງໃຫ້ຜູ້ມີສ່ວນຮ່ວມທັງຫມົດໃນຕົ້ນປີກ່ຽວກັບການດໍາເນີນງານທີ່ກ່ຽວຂ້ອງກັບໜ່ວຍງານຂະແໜງການ ທີ່ຈະມາເຖິງ ແລະຫົວຂໍ້ປຶກສາຫາລືທີ່ຄາດໄວ້ ເພື່ອໃຫ້ພາກສ່ວນກ່ຽວຂ້ອງສາມາດກະກຽມ ເພື່ອເຂົ້າຮ່ວມ ຢ່າງມີປະສິດທິພາບ.
- ຖ້າຫາກ ໜ່ວຍງານຂະແໜງການ ຕ້ອງການປັບປຸງແຜນວຽກປະຈຳປີຂອງຕົນໃນກາງປີ, ກອງເລຂາໜ່ວຍງານຂະແໜງການຈະຕ້ອງໄດ້ສົ່ງແຜນວຽກໜ່ວຍງານຂະແໜງການປະຈຳປີ ທີ່ປັບປຸງໃຫມ່ ໃຫ້ກັບກອງເລຂາຂະບວນການໂຕະມົນ ເພື່ອຮັກສາຂໍ້ມູນຢູ່ໃນ ເວັບໄຊທ໌ຂະບວນການໂຕະມົນ.

# 2.1. ຄວາມຖີ່ຂອງການປະຊຸມ ແລະ ການລາຍງານ

- ໜ່ວຍງານຂະແໜງການ ຕ້ອງຈັດກອງປະຊຸມຂະແໜງການຕົນ ໃນແຕ່ລະໄຕມາດ ແລະ ຢ່າງໜ້ອຍ 1 ກອງປະຊຸມໜ່ວຍງານຂະແໜງການ ລະດັບຜູ້ບໍລິຫານ (ກະຊວງ) ກ່ອນກອງປະຊຸມໂຕະມົນລະດັບສູງ/ກອງປະຊຸມໂຕະມົນປະຈໍາປີ ເພື່ອໃຫ້ຜົນໄດ້ຮັບຂອງແຕ່ລະໜ່ວຍງານຂະແໜງການ ສາມາດລາຍງານໃນກອງປະຊຸມໂຕະມົນລະດັບສູງ/ກອງປະຊຸມໂຕະມົນປະຈໍາປີ.
- ກອງປະຊຸມກອງເລຂາໜ່ວຍງານຂະແໜງການ ຮ່ວມກັບ ກອງເລຂາຂະບວນການໂຕະມົນ ຈະຈັດຂຶ້ນທຸກໆໄຕມາດ ເພື່ອລາຍງານຄວາມຖືຍໜ້າໃນການຈັດຕັ້ງປະຕິບັດແຜນວຽກປະຈໍາປີຂອງໜ່ວຍງານຂະແໜງການ ແລະປຶກສາບັນຫາອື່ນໆ ທີ່ກ່ຽວຂ້ອງ.
- ໜ່ວຍງານຂະແໜງການ ລາຍງານຄວາມຄືບໜ້າໃນກອງປະຊຸມໄຕມາດ ແລະ ສົ່ງບົດລາຍງານຄວາມຄືບໜ້າໃຫ້ກັບກອງເລຂາຂະບວນການໂຕະມົນທຸກໆ 6 ເດືອນ ຫຼືຢ່າງໜ້ອຍປະຈໍາປີ (ເດືອນຕຸລາ)

# 3. ກອງປະຊຸມປິ່ນອ້ອມຂະບວນການໂຕະມົນ

1. **ກອງປະຊຸມປຶກສາຫາລືກ່ຽວກັບການກະກຽມກອງປະຊຸມໂຕະມົນ**
   - ພັດທະນາເສດຖະກິດ-ສັງຄົມ ໃນລະຫວ່າງປີກັບພາກສ່ວນກ່ຽວຂ້ອງຕ່າງໆ, ລວມທັງລັດຖະບານ, ຄູ່ຮ່ວມພັດທະນາ, ພາກເອກະຊົນ, ພາກສັງຄົມ ແລະອື່ນໆ. ເພື່ອວາງແຜນ, ກະກຽມທາງດ້ານເນື້ອໃນ ແລະຄວາມພ້ອມໃນດ້ານຕ່າງໆ ໃຫ້ແກ່ການຈັດກອງປະຊຸມໂຕະມົນລະດັບສູງ ໂດຍຜ່ານການປຶກສາຫາລືກັບ ກະຊວງຂະແໜງການ, ຄູ່ຮ່ວມພັດທະນາ ແລະພາກສ່ວນກ່ຽວຂ້ອງອື່ນໆ ໂດຍສະເພາະ ຫົວຂໍ້,ວາລະກອງປະຊຸມ, ຄວາມຄືບໜ້າ, ສິ່ງທ້າທາຍ ແລະດ້ານອື່ນໆ.
2. **ກອງປະຊຸມປະທານ ແລະປະທານຮ່ວມຂອງໜ່ວຍງານຂະແໜງການ**
   - ເພື່ອປຶກສາຫາລືກ່ຽວກັບບັນຫາສະເພາະທີ່ກ່ຽວຂ້ອງກັບໜ່ວຍງານຂະແໜງການ , ແລະໄດ້ຮັບຂໍ້ມູນຈາກແຕ່ລະໜ່ວຍງານຂະແໜງການ ກ່ຽວກັບການກະກຽມ ກອງປະຊຸມໂຕະມົນ ແລະນະໂຍບາຍ ຫຼື ຍຸດທະສາດທີ່ສຳຄັນອື່ນໆ ຕາມຄວາມຕ້ອງການ.
3. **ກອງປະຊຸມສຳລັບຄູ່ຮ່ວມພັດທະນາທີ່ບໍ່ມີ ຫ້ອງການປະຈຳ ສປປ ລາວ**
   - ແນໃສ່ປັບປຸງວຽກງານການກະກຽມຂອງ ໂຕະມົນ ແລະ ເພື່ອແລກປ່ຽນຄວາມຄິດເຫັນກ່ຽວກັບການປັບປຸງຂະບວນການກະກຽມກັບບັນດາເອກອັກຄະລັດຖະທູດ ແລະຜູ້ຕາງໜ້າບັນດາສະຖານທູດທີ່ມີສຳນັກຕັ້ງງານ ຢູ່ ສ. ຫວຽດນາມ ແລະ ຣາຊາອານາຈັກໄທ ທີ່ໄດ້ຮັບການຮັບຮອງ ກັບ ສປປ ລາວ.
4. **ກອງປະຊຸມຜົບປະນັກຂ່າວ**
   - ແນໃສ່ປະກາດແຜນການສຳລັບໄລຍະການປຶກສາຫາລືທີ່ນຳໄປສູ່ກອງປະຊຸມໂຕະມົນ ແລະ ແຈ້ງໃຫ້ພາກສ່ວນກ່ຽວຂ້ອງ, ປະຊາຊົນ ລາວ ຮັບຮູ້ກ່ຽວກັບບັນຫາການພັດທະນາປະເພດໃດແດ່ທີ່ຄວນໄດ້ຮັບບຸລິມະສິດ.
5. **ກອງປະຊຸມຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ**
   - ກອງປະຊຸມພາຍໃນຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ແມ່ນເພື່ອໃຫ້ບັນດາກະຊວງທີ່ກ່ຽວຂ້ອງກອດກາຄືນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຜົນໄດ້ຮັບຂອງ ກອງປະຊຸມໂຕະມົນ ໃນໄລຍະຜ່ານມາ ແລະ ປຶກສາຫາລືກ່ຽວກັບທິດທາງ ຂະບວນການໂຕະມົນ ໃນຄັ້ງຕໍ່ໄປ.

# 3. ບັນດາກອງປະຊຸມເພື່ອກະກຽມກອງປະຊຸມໂຕະມົນ (ຕໍ່)

**6. ກອງປະຊຸມປຶກສາຫາລືລ່ວງໜ້າ**

- ໃນກໍລະນີທີ່ມີບາງບັນຫາສະເພາະທີ່ຮຽກຮ້ອງໃຫ້ມີການສົນທະນາຮ່ວມກັບຜູ້ມີສ່ວນຮ່ວມຕ່າງໆກ່ອນກອງປະຊຸມໂຕະມົນເຊັ່ນ: ການທົບທວນຄືນຄວາມຄືບໜ້າ, ການສ້າງນະໂຍບາຍ ຫຼື ຍຸດທະສາດທີ່ສຳຄັນ, ກອງປະຊຸມປຶກສາຫາລືລ່ວງໜ້າແມ່ນໄດ້ຈັດຂຶ້ນກ່ອນ ກອງປະຊຸມໂຕະມົນ.

**7. ກອງປະຊຸມໂຕະມົນ**

- ແມ່ນເປັນເວທີສົນທະນາການປຶກສາຫາລືກ່ຽວກັບການປະເມີນຄືນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ພ້ອມທັງສະຫລຸບແຜນພັດທະນາເສດຖະກິດ - ສັງຄົມ ແຫ່ງຊາດ ແລະ ວິທີການຂອງການຈັດຕັ້ງປະຕິບັດ.

**8. ລາຍງານປະທານປະເທດ/ນໍາຍົກລັດຖະມົນຕີ**

- ກອງເລຂາຂະບວນການໂຕະມົນ ສະຫຼຸບລາຍງານຜົນຂອງກອງປະຊຸມໂຕະມົນ ພາຍຫຼັງສໍາເລັດກອງປະຊຸມ ແລະ ໃຫ້ການຕ້ອນຮັບທ່ານນາຍົກລັດຖະມົນຕີ ພ້ອມດ້ວຍຜູ້ຕາງໜ້າຄະນະ ປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການ ເພື່ອລາຍງານຜົນຂອງ ກອງປະຊຸມໂຕະມົນ ຕໍ່ທ່ານ ນາຍົກລັດຖະມົນຕີ.

**9. ການເຂົ້າຢ້ຽມຄານັບທ່ານປະທານປະເທດ/ ທ່ານ ນາຍົກລັດຖະມົນຕີ**

- ກອງເລຂາຂະບວນການໂຕະມົນໄດ້ຈັດການເຂົ້າຢ້ຽມຄໍານັບທ່ານປະທານປະເທດແຫ່ງ ສປປ ລາວ ຫຼື ທ່ານ ນາຍົກລັດຖະມົນຕີ ຢ່າງເປັນທາງການ ພ້ອມດ້ວຍຜູ້ຕາງໜ ້າປະທານ ແລະ ປະທານຮ່ວມ ຂອງໜ່ວຍງານຂະແໜງການ ເພື່ອລາຍງານຜົນຂອງ ກອງປະຊຸມໂຕະມົນ.

**10. ກອງປະຊຸມເຜີຍແຜ່ແຈ້ງການແນະນໍາຂອງນາຍົກລັດຖະມົນຕີ**

- ພາຍຫຼັງ ກອງປະຊຸມໂຕະມົນສໍາເລັດແລ້ວ, ລັດຖະບານ ໄດ້ອອກແຈ້ງການແນະນໍາຂອງນາຍົກລັດຖະມົນຕີກ່ຽວກັບຜົນໄດ້ຮັບຂອງກອງປະຊຸມເພື່ອມອບໃຫ້ບັນດາກະຊວງທີ່ກ່ຽວຂ້ອງເປັນຜູ້ຈັດຕັ້ງປະຕິບັດ ແລະຕິດຕາມຜົນຂອງກອງປະຊຸມໂຕະມົນ. ກອງເລຂາຂະບວນການໂຕະມົນ ແມ່ນຕ້ອງຈັດກອງປະຊຸມເຜີຍແຜ່ແຈ້ງການແນະນໍາຂອງນາຍົກລັດຖະມົນຕີ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານ, ຕິດຕາມ ແລະກວດກາພາຍຫຼັງຜົນຂອງກອງປະຊຸມໂຕະມົນ.

# 3.1. ເອກະສານສະໜັບສະໜູນກອງປະຊຸມໂຕະມົນ

| | ລາຍການ | |
|---|---|---|
| | 1. ແນວຄວາມຄິດຂອງກອງປະຊຸມ<br>2. ເອກະສານພື້ນຖານ<br>3. ຄຳແນະນຳການເຂົ້າຮ່ວມກອງປະຊຸມ<br>4. ບົດລາຍງານການຊ່ວຍເຫຼືອທາງການເພື່ອການພັດທະນາ<br>5. ບົດລາຍງານຂອງໜ່ວຍງານຂະແໜງການ<br>6. ທົບທວນແຜນດຳເນີນງານຖະແຫ່ງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ<br>7. ຮ່າງ/ແຜນພັດນາເສດຖະກິດ-ສັງແຫ່ງຊາດ 5 ປີ<br>8. ເອກະສານນະໂຍບາຍອື່ນໆ | |

# 4. ການຕິດຕາມ ແລະ ປະເມີນຜົນ

**Implementation period of 9th NSEDP**

## RTIM 2023

SWGs consultation processes

## RTIM 2024

SWGs consultation processes

## HL-RTM 2025

Final assessment of 9th NESDP and Finalization of 10th NSEDP(2026-2030)

SWGs consultation processes

# ຂໍຂອບໃຈ